# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 1 ເມສາ 2007 (4-1-2007)

## ອົງພຣະເຢຊູໄດ້ສິ້ນພຣະຊົນເພື່ອເຮົາ?

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 12:12-15, 13:21,26-27,19:16-19,33-37.
**ຄຳຖາມແຫ່ງຊີວິດ:** ເປັນດ້ວຍເຫດໃດອົງພຣະເຢຊູຈຳເປັນຈຶ່ງຕ້ອງຕາຍ?
**ພຣະຄັມພີແຫ່ງຄວາມຈິງ:** ພຣະເຢຊູ, ພຣະເມສີອານ, ຜູ້ເປັນເຈົ້າຊີວິດໄດ້ຕາຍທີ່ໄມ້ກາງແຂນແທນຄວາມຜິດບາບຂອງພວກເຮົາ.
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍທ່ານໃຫ້ຄົ້ນພົບວ່າອົງພຣະເຢຊູໄດ້ເຮັດອັນໃດເພື່ອພວກເຮົາ:

- ໃຫ້ຮູ້ວ່າການຕາຍຂອງອົງພຣະເຢຊູນັ້ນກໍເພື່ອຄວາມຜິດບາບຂອງເຮົາ,
- ໃຫ້ຂອບພຣະຄຸນຕໍ່ອົງພຣະເຢຊູທີ່ພຣະອົງໄດ້ຕາຍເທິງໄມ້ກາງແຂນແລະໄດ້ສິ້ນພຣະຊົນເພື່ອເຮົາ.

ຕລອດຊີວິດຂ້າພະເຈົ້າໄດ້ຍິນຜູ້ເປັນບິດາອ້ອນວອນເພື່ອເອື້ອຍໃຫ້ກັບຄືນມາມີຄວາມສຳພັນກັບພຣະຄຣິດອີກ. ຜູ້ເປັນພໍ່ໄດ້ເອົາໃຈໃສ່ລ້ຽງລາວມາເພື່ອໃຫ້ລາວໄດ້ຮູ້ ແລະຮັບໃຊ້ອົງພຣະຄຣິດ, ແຕ່ວ່າຊີວິດຂອງລາວໄດ້ເດີນອອກໄປໃນທາງຜິດ. ຜູ້ເປັນພໍ່ໄດ້ໃຊ້ເວລາຫລາຍທີ່ສຸດເພື່ອສັ່ງສອນລູກສາວໃຫ້ຮູ້ຈັກທາງດີແລະຖືກຕ້ອງ ແຕ່ເຫັນວ່າບໍ່ໄດ້ຜົນ ຈົນເຖິງຜູ້ເປັນພໍ່ໃກ້ຈະຕາຍ ລູກສາວຄົນນັ້ນໄດ້ຫັນຕ່າວຄືນມາມີຄວາມສຳພັນກັບອົງພຣະຄຣິດອີກ. ຜູ້ເປັນພໍ່ມີພະຍາດມະເຮັງໄດ້ນອນຢູ່ເທິງຕຽງ, ຜູ້ເປັນລູກສາວກໍຍືນຢູ່ຂ້າງ ລາວໄດ້ມອບຖວາຍຊີວິດຂອງຕົນເອງຕໍ່ອົງພຣະຄຣິດ ແລະ ຍອມຮັບໃຊ້ຄືເປັນຜູ້ຫລິ້ນປີອາໂນໃນຄຣິສຕະຈັກ. ຂ້າພະເຈົ້າຈະບໍ່ລືມຄຳທີ່ພໍ່ເວົ້າວ່າ ຖ້າເປັນພະຍາດມະເຮັງຕາຍ ເພື່ອຈະນຳເອົາລູກສາວຄືນມາຫາພຣະເຈົ້າມັນກໍສົມຄ່າ. ໃນມື້ນັ້ນເອງຂ້າພະເຈົ້າໄດ້ຮຽນຮູ້ເຖິງຄວາມຮັກຂອງພໍ່. ພາບນັ້ນໄດ້ ສະແດງເຖິງຄວາມຮັກທີ່ພຣະຄຣິດມີຕໍ່ຂ້າພະເຈົ້າ.

ໃນເມື່ອພວກເຮົາເປັນຄົນຜິດຄົນບາບ ແລະຂາດຈາກພຣະເຈົ້າ, ມີທາງດຽວທີ່ເຮົາຈະຕ້ອງມີຊີວິດຢູ່ຕລອດໄປເປັນນິດນັ້ນໄດ້ ຄືຍອມໃຫ້ອົງພຣະເຢຊູຕາຍແທນເຮົາ. ໂຢຮັນໄດ້ບອກເຖິງເຣື່ອງຊີວິດສຸດທ້າຍຂອງອົງພຣະເຢຊູໃນໂລກນີ້ວ່າພຣະອົງເປັນພຣະເມສີອານ-ກະສັດຜູ້ສະເດັດເຂົ້າມາໃນໂລກເພື່ອຕາຍເທິງໄມ້ກາງແຂນ ເພື່ອຄວາມບາບຂອງມະນຸດທົ່ວໂລກ. ສາມອາທິດຫລັງຈາກມື້ຄືນພຣະຊົນ ພວກເຮົາຈະໄດ້ກັບຄືນມາຮຽນເຖິງເຫດການໃນຫ້ອງຊັ້ນເທິງ. ສຳລັບວັນນີ້ ແລະອາທິດໜ້າພວກເຮົາຈະໄດ້ພາກັນສຶກສາເຣື້ອງອົງພຣະເຢຊູຖືກຄຶງໄວ້ທີ່ໄມ້ກາງແຂນ ແລະການຄືນພຣະຊົນ.

## ສຶກສາພຣະຄັມພີ

### 1. ສະເດັດເຂົ້າກຸງຢ່າງຜູ້ມີຊັຍ (ໂຢຮັນ 12:12-15)

**ວັນໝ້ານາ**, ເປັນວັນທີ່ຄົນຖືກ້ານຕານມາຕ້ອນຮັບພຣະເຢຊູ ເປັນວັນອາທິດສຸດທ້າຍຢູ່ໃນໂລກຂອງພຣະເຢຊູ, ພຣະອົງໄດ້ສະເດັດເຂົ້າກຸງເຢຣູຊາເລັມເໝືອນກັບກະສັດທີ່ເດີນທາງໄປໃນບ່ອນຕ່າງໆ. **ມີຝູງຄົນກຸ່ມໃຫຍ່**ໄດ້ຕ້ອນຮັບເອົາພຣະອົງເຂົ້າໃນເມືອງຊຶ່ງເປັນ**ງານປັດສະຄາ**ໄດ້ເລີ້ມຕົ້ນຂຶ້ນ. ໂຢຮັນໄດ້ບອກເຖິງເຫດຜົນທີ່ມີຄົນກຸ່ມໃຫຍ່ເຂົ້າມາໂຮມກັນຄື: ເພື່ອຈະໄດ້ເຫັນພຣະເຢຊູ ແລະເບິ່ງລາຊະໂຣຜູ້ຄືນມາຈາກຕາຍຫລາຍວັນແລ້ວໄດ້ຄືນມາອີກ (ໂຢຮັນ

໑໒:18) ຄົນເຫລົ່ານັ້ນຢາກເຫັນວ່າລາຊະໂຣໄດ້ເປັນຄືນມາຈາກຕາຍແທ້ແນ່ນອນບໍ່? ຝູງຊົນທັງຫລາຍໄດ້ຖືກ້ານຕານເປັນສັນຍາລັກຂອງການມີກຽດໃຫຍ່, ເມື່ອພຣະເຢຊູໄດ້ສະເດັດໄປຕາມຖນົນ ພວກເຂົາໄດ້ຮ້ອງສັຣເສີນພຣະອົງ ອີງຕາມປື້ມເພງສັຣເສີນບົດ 118:25-26. **ໂຮຊັນນາ, ຂໍໃຫ້ທ່ານຜູ້ສະເດັດມາໃນພຣະນາມຂອງອົງພຣະຜູ້ເປັນເຈົ້າ** ເພາະພວກເຂົາເຊື່ອວ່າພຣະເຢຊູເປັນກະສັດຂອງເຂົາ. ແນ່ນອນຝູງຊົນເຊື່ອວ່ານີ້ເປັນໂອກາດພິເສດທີ່ກະສັດສະເດັດມາເພື່ອປົດປ່ອຍເຂົາອອກຈາກການເປັນທາດຂອງໂຣມມັນ.

ຢ່າງໃດກໍດີ, ຄຳທີ່ພວກເຂົາຄິດວ່າພຣະເຢຊູຈະເປັນຜູ້ປົກຄອງນັ້ນກໍແຕກຕ່າງກັບຈຸດປະສົງຂອງອົງພຣະເຢຊູທີ່ສະເດັດເຂົ້າມາໃນໂລກ. ພຣະເຢຊູສະເດັດເຂົ້າກຸງໂດຍການຂີ່ຫລັງ**ລໍນ້ອຍ** ແທນທີ່ຈະຂີ່ມ້າສະງ່າງາມຢ່າງກະສັດ. ພຣະອົງໄດ້ອ້າງເຖິງຂໍ້ພຣະຄັມພີເດີມ ຊາຂາຣີຢາ 9:9, ທີ່ເວົ້າຊ້ຳອີກວ່າ ພຣະເຢຊູເປັນພຣະເມສີອານຜູ້ສະເດັດມາດ້ວຍການຖ່ອມຕົວ ແທນທີ່ຈະເປັນຜູ້ມີອຳນາດເໜືອນາຍທະຫານ.

ນີ້ເປັນພາບທີ່ມົວງເຖິງພຣະບຸດຂອງພຣະເຈົ້າ. ພຣະເຢຊູໄດ້ສະເດັດເຂົ້າກຸງເຢຣູຊາເລັມໂດຍຂີ່ຫລັງລໍນ້ອຍ. ບາງຄົນກໍຍົກຍ້ອງ: ບາງຄົນກໍສົນໃຈຢາກເຫັນ. ບາງຄົນກໍປະກາດໄປວ່າພຣະເຢຊູເປັນເຈົ້າກະສັດຂອງພວກເຂົາທັງໆທີ່ພຣະເຢຊູໄດ້ຂີ່ຫລັງລໍນ້ອຍ. ບາງຄົນກໍໄດ້ຕອບຮັບດ້ວຍໃບຕານທີ່ເປັນສັນຍາລັກຂອງຊາດ. ອົງພຣະເຢຊູເຂົ້າໄປໃນເມືອງເພື່ອພຣະອົງຈະໄດ້ຖືກຈັບໃນວັນພະຫັດຕອນຄ່ຳ ແລະຖືກຄຶງເທິງໄມ້ກາງແຂນໃນວັນສຸກ.

ໃນວັນອາທິດມີຄົນບາງກຸ່ມໄປນະມັສການ, ບາງຄົນໄປເພາະຢາກຮູ້ເຫັນເທົ່ານັ້ນ. ສຳລັບຜູ້ໄປນະມັສການອົງພຣະເຢຊູ ພວກເຂົາໄດ້ພົບກັບພຣະອົງຜູ້ຄືນມາຈາກຕາຍ, ສຳລັບຜູ້ໄປເພາະຢາກຮູ້ເຫັນ ກໍໄດ້ພົບກັບຄວາມຜິດຫວັງເພາະສະພາບການທີ່ເກີດຂຶ້ນ. ການຕອບສນອງຂອງຜູ້ທີ່ນະມັສການພຣະອົງກໍບໍ່ໄດ້ປ່ຽນແປງຄວາມຈິງທີ່ວ່າອົງພຣະເຢຊູເປັນພຣະເມສີອານ-ກະສັດຜູ້ເຂົ້າມາປົດປ່ອຍພວກເຂົາທາງດ້ານວິນຍານຈິດ.

**໒. <u>ການທໍຣະຍົດຢ່າງຕົກໃຈ</u>** (ໂຢຮັນ 13:໒1,໒6-໒7)

ສີ່ມື້ຫລັງວັນອາທິດທຳອິດໃນວັນໃຊ້ໃບຕານ, ອາທິດສຸດທ້າຍຂອງຊີວິດ ອົງພຣະເຢຊູໄດ້ກິນເຂົ້າຄາບສຸດທ້າຍຮ່ວມກັບພວກສາວົກໃນວັນພະຫັດ. ພຣະອົງໄດ້ລ້າງຕີນ ແລະໄດ້ອະທິບາຍຄວາມໝາຍຂອງວັນປັສຄາວ່າ ພຣະອົງຕ້ອງເດີນເຂົ້າໄປຫາໄມ້ກາງແຂນໃນໄວໆນີ້. ຫລັງຈາກພຣະອົງໄດ້ຈັບເອົາຈອກມາ ພຣະອົງມີພຣະທັຍ**ເສົ້າໃນຈິດໃຈ**. ພຣະອົງບໍ່ໄດ້ເປັນທຸກເພາະຄວາມຕາຍ ແຕ່ພຣະອົງເສົ້າພຣະທັຍເພາະຄົນທີ່ຮູ້ ແລະຮັກຈະໄດ້ **ທໍຣະຍົດ** ຕໍ່ພຣະອົງ. ບໍ່ມີຜູ້ໃດຕ້ອງການປະເຊີນກັບການທໍຣະຍົດ ໂດຍສະເພາະຄົນທີ່ໃກ້ຊິດຕິດພັນກັນດີ. ຢູດາໄດ້ເປັນນາຍຄັງຂອງພວກສາວົກ, ໝາຍຄວາມວ່າລາວເປັນຜູ້ທີ່ຄົນທັງຫລາຍໄວ້ວາງໃຈ (ໂຢຮັນ 13:໒9) ເວລາພຣະເຢຊູໄດ້ບອກວ່າຜູ້ໃດ ຈະເປັນຜູ້ທໍຣະຍົດ ພວກສາວົກທັງຫລາຍກໍຖາມເຖິງຕົນເອງ, ເປໂຕຂໍໃຫ້ພຣະເຢຊູບອກຊື່ຂອງຜູ້ທີ່ຈະທໍຣະຍົດຂຶ້ນມາເພາະຈະບໍ່ແມ່ນລາວຢ່າງແນ່ນອນ.

ພຣະເຢຊູໄດ້ຕອບວ່າຜູ້ທໍຣະຍົດແມ່ນຜູ້ທີ່ພຣະອົງໄດ້ເອົາ**ເຂົ້າຈີ່ຕ່ອນນຶ່ງ**ໃຫ້ຫລັງຈາກພຣະອົງໄດ້ຈ້ຳລົງໃນຖ້ວຍ. ພຣະເຢຊູປະກາດເຖິງຜູ້ທໍຣະຍົດນັ້ນເປັນໜ້າແປກໃຈສຳລັບພວກສາວົກ. ດັ່ງນັ້ນ, ເປໂຕຈຶ່ງບອກໃຫ້ໂຢຮັນຖາມພຣະເຢຊູວ່າຜູ້ທໍຣະຍົດນັ້ນແມ່ນໃຜກັນແທ້. ອົງພຣະເຢຊູໄດ້ບອກກັບໂຢຮັນເຖິງຜູ້ທໍຣະຍົດເປັນການລັບ ແມ່ນຜູ້ທີ່ພຣະອົງໄດ້**ເອົາເຂົ້າຈີ່**ໃຫ້ ຫລັງຈາກຈ້ຳລົງໃນຖ້ວຍ. ການທີ່ພຣະເຢຊູໄດ້ເລືອກເອົາເຂົ້າຈີ່ຈ້ຳລົງແລະຍື່ນໃຫ້ແຂກນັ້ນແມ່ນການສະແດງເຖິງການໃຫ້ກຽດແກ່ແຂກ ໂຢຮັນບໍ່ຄິດເລີຍວ່າຈະເປັນການທໍຣະຍົດ. ບາງທີ ໂຢຮັນບໍ່ໄດ້ບອກຄົນອື່ນເຖິງສິ່ງທີ່ພຣະເຢຊູບອກລາວ ຫລືພວກເຂົາບໍ່ເຊື່ອວ່າຢູດາເປັນຄົນທີ່ສາມາດຫັກຫລັງພຣະເຢຊູໄດ້ເພາະພວກເຂົາເຊື່ອຜູ້ທີ່ເປັນນາຍຄັງ.

ຫລັງຈາກ **ຢູດາ** ໄດ້ກິນເຂົ້າຈີ່, ໂຢຮັນໄດ້ກ່າວວ່າ **ຊາຕານໄດ້ເຂົ້າສິງຢູດາ**. ນີ້ແມ່ນຄັ້ງດຽວທີ່ປຶ້ມຂ່າວປະເສີດໂຢຮັນໄດ້ກ່າວເຖິງຊາຕານ. ການທີ່ຢູດາໄດ້ທໍຣະຍົດຕໍ່ອົງພຣະເຢຊູນັ້ນເປັນການແປກໃຈໃນຫລາຍໆດ້ານ. ພວກສາວົກທຸກຄົນໄດ້ໄວ້ວາງໃຈກັບຢູດາ. ຢູດາໄດ້ເຮັດສັນຍາລັກຫລາຍຢ່າງໃນການທໍຣະຍົດຕໍ່ອົງພຣະຄຣິດ. ດັ່ງນັ້ນ,

ພຣະເຢຊູຈຶ່ງເວົ້າຕໍ່ຢູດາວ່າ **ໃຫ້ເຮັດໄວໆ**. ຖ້າຢູດາຕັດສິນໃຈຈະເປັນສາຂາອຳນາດຂອງຄວາມມືດ, ພຣະເຢຊູໄດ້ບອກລາວໃຫ້ເຮັດຕາມແຜນການອັນນັ້ນ. ແຜນການຂອງຢູດາບໍ່ໄດ້ເປັນການທີ່ແປກເພາະພຣະອົງຊົງຮູ້ລ່ວງໜ້າແລ້ວ. ພຣະເຢຊູເຫັນການມີຊີວິດຢູ່ຫລືຕາຍໄປນັ້ນແມ່ນແຜນການຂອງພຣະບິດາ.

ເຫມືອນດັ່ງພວກສາວົກ, ພວກເຮົາບໍ່ຄວນເຮັດໃຫ້ຄວາມຜິດບາບຂອງຄົນອື່ນຢູ່ໃກ້ຫລືຂວາງທາງໃນການຕິດຕາມອົງພຣະເຢຊູໄປ. ບໍ່ແມ່ນທຸກຄົນທີ່ອ້າງຕົວເອງເປັນຄົນຮູ້ຈັກກັບພຣະຄຣິດແລະຕິດຕາມພຣະອົງກາຍເປັນສາວົກຢ່າງແທ້ຈິງ. ນັ້ນແຫລະ, ເຮົາຕ້ອງມີຄວາມເຊື່ອໃນພຣະອົງ ບໍ່ແມ່ນໃນຄົນຜູ້ທີ່ຕິດຕາມພຣະເຢຊູ.

## 3. <u>ການສິ້ນພຣະຊົນຢ່າງບໍ່ຜິດພາດ</u> (ໂຢຮັນ 19: 16-19, 33-37)

ພຣະຄຳຕອນນີ້ໄດ້ນຳພາພວກເຮົາຈາກວັນພະຫັດຕອນແລງເຂົ້າໄປໃນຫ້ອງຊັ້ນເທິງ ໃນຕອນວັນສຸກແຕ່ເຊົ້າໆ ປະມານ (6:00 ມຊ). ຈາກຫ້ອງຕັດສິນຂອງປີລາດໄປເຖິງພູກະໂຫລກຫົວ (ໃນພາສາອັງກິດ) ຄາວະລີ (ໃນພາສາລາຕິນ) ໂຄຣະໂຄທາ (ໃນພາສາ ເຮັບເຣີ). ຕໍ່ມາໃຫ້ຕອນເຊົ້າມື້ນັ້ນ (ປະມານ 9:00 ມຊ). ການທໍຣະຍົດນັ້ນບໍ່ເປັນການພຽງພໍຕໍ່ຜູ້ມີອຳນາດທາງສາສນາ. ພວກເຂົາຈະບໍ່ຢຸດຢັ້ງຈົນກວ່າອົງພຣະເຢຊູ**ຖືກຄຶງ**ທີ່ໄມ້ກາງແຂນ. ອົງພຣະເຢຊູໄດ້ແບກ**ໄມ້ກາງແຂນຂອງຕົນເອງ**ຈາກບ່ອນຕັດສິນຈົນໄປຮອດພູ **ໂຄຣະໂຄທາ**, ບ່ອນ**ກະໂຫລກຫົວ,** ບ່ອນພວກເຂົາໄດ້ທໍຣະມານ ແລະປະຫານພຣະອົງເສັຽ. ຜູ້ທີ່ມີຊີວິດຢູ່ໃນເວລາພຣະເຢຊູຖືກຄຶງໄວ້ທີ່ໄມ້ກາງແຂນ ພວກເຂົາບໍ່ຕ້ອງການບອກສອນເຖິງຄວາມທໍຣະມານ ເພາະພວກເຂົາໄດ້ເຫັນກັບຕາເຖິງການຕາຍຢ່າງທໍຣະມານແສນສາຫັດທຸກໆ ວັນ.

ອົງພຣະເຢຊູຈຳເປັນຕ້ອງຖືກຄະດີ, ດັ່ງນັ້ນ, **ປີລາດ**ຈຶ່ງສັ່ງໃຫ້ຂຽນປ້າຍທີ່ເວົ້າວ່າ, **ພຣະເຢຊູໄທນາຊາເຣັດ, ກະສັດຂອງພວກຢິວ**. ຄຳເວົ້າດັ່ງກ່າວນີ້ ແມ່ນຄວາມຍົກຍ້ອງ ສັຣເສີນຂອງຄົນທີ່ຕ້ອນຮັບ ເວລາພຣະເຢຊູສະເດັດເຂົ້າໄປໃນກຸງເຢຣູຊາເລັມ ອາທິດນຶ່ງກ່ອນນັ້ນຕອນອາທິດກ້ານຕານ (ໂຢຮັນ 12:13), ແຕ່ວ່າກະສັດອົງນີ້ສະເດັດເຂົ້າມາໃນກຸງເຢຣູຊາເລັມເພື່ອຕາຍ, ບໍ່ແມ່ນເຂົ້າໄປເພື່ອຈະຕັ້ງອານາຈັກໃນໂລກ.

ຫລັງຈາກອົງພຣະເຢຊູໄດ້ຖືກຄຶງທີ່ໄມ້ກາງແຂນຕົ້ນຊົ່ວໂມງ, ທະຫານທີ່ເຝົ້າຍາມເຂົ້າມາເພື່ອຈະໄດ້ຕີກະດູກຂາໃຫ້ຫັກເພື່ອຈະໃຫ້ພຣະເຢຊູຕາຍໄວໆຂຶ້ນ. ທຳມະດາແລ້ວຜູ້ທີ່ຖືກຄຶງທີ່ໄມ້ກາງແຂນທໍຣະມານຫລາຍ ຖ້າຕ້ອງການຫັນໃຈຈຳເປັນໃຊ້ຂາເພື່ອຊູຮ່າງກາຍ. ພວກທະຫານຕ້ອງໃຫ້ພຣະເຢຊູຕາຍກ່ອນວັນຊະບາໂຕມາເຖິງ ຄືຈຳເປັນຕ້ອງຫັກກະດູກຂ້າ. ແຕ່ໃນເມື່ອທະຫານເຂົ້າມາຫາກໍເຫັນວ່າພຣະອົງໄດ້ສິ້ນພຣະຊົນແລ້ວ. ໂຢຮັນໄດ້ເປັນພະຍານເຖິງອົງພຣະເຢຊູເວລາພຣະອົງຖືກຄຶງໄວ້ທີ່ໄມ້ກາງແຂນ ລາວໄດ້ກ່າວເພີ້ມວ່າ ພວກທະຫານໄດ້ແທງຂ້າງຂອງພຣະອົງ, **ເລືອດແລະນ້ຳໄດ້ໄຫລອອກ.** ນ້ຳແລະເລືອດໄດ້ໄຫລອອກມາຫມາຍຄວາມວ່າຫົວໃຈແຕກສະລາຍ, ຕາມຫລັກການຂອງຫມໍແລ້ວມັນເປັນໄປບໍ່ໄດ້ທີ່ຈະມີຊີວິດຢູ່ໃນສະພາບນັ້ນ. ຕາມທັສນະຂອງໂຢຮັນແລ້ວ ເລືອດແລະນ້ຳໄຫລອອກມາໄດ້ບອກວ່າພຣະເຢຊູໄດ້ສິ້ນພຣະຊົນແທ້. ໂຢຮັນໄດ້ບອກວ່າເຖິງຈຸດປະສົງທີ່ພຣະເຢຊູສິ້ນພຣະຊົນ ເພື່ອທ່ານຈະໄດ້ເຊື່ອ ຂໍ້ 35)

ໂຢຮັນໄດ້ເຫັນສະພາບຂອງພຣະຢຊູ ທີ່ວ່າຂາຂອງພຣະອົງບໍ່ໄດ້ຖືກຫັກ ເປັນການສຳເຣັດຈາກພຣະຄຳພີເດີມວ່າພຣະເຢຊູເປັນແກະນ້ອຍສຳລັບປັສຄາ ເພາະສັດທີ່ຈະເອົາມາຖວາຍໃນວັນນີ້ ບໍ່ໃຫ້ມີກະດູກຫັກ. ຄຳທຳນວາຍນີ້ມີຢູ່ໃນປື້ມຊາຂາຣີຢາ 12:10. ໄດ້ເວົ້າເຖິງຂ້າງຖືກແທງເປັນການສຳຄັນ ເພາະວ່າພຣະຄຳຂໍ້ນີ້ໄດ້ເວົ້າເຖິງການເສົ້າສລົດໃຈ ແລະການຖິ້ມໃຈເກົ່າເອົາໃຈໃຫມ່ ເປັນການປະກາດເຖິງນ້ຳພຸທີ່ຈະຊຳຣະລ້າງຄວາມຜິດຄວາມບາບທັງສິ້ນ. ໂຢຮັນໄດ້ຮູ້ແນ່ນອນວ່າພຣະເຢຊູໄດ້ສິ້ນພຣະຊົນ, ແລະໄດ້ເຊື່ອວ່າການຕາຍຂອງພຣະເຢຊູມີອຳນາດທີ່ຈະຊຳຣະລ້າງຄວາມບາບຫມົດສິ້ນ.

**ບົດຮຽນຊີວິດ**

ພຣະເຢຊູໄດ້ສິ້ນພຣະຊົນເພື່ອພຣະອົງຈະ:

- ເປັນເຈົ້າຊີວິດຂອງເຮົາ
- ປະທານໃຫ້ເຮົາມີອຳນາດທີ່ຈະສັດຊື່ຕໍ່ພຣະອົງ
- ຕາຍໃນບ່ອນຂອງເຮົາເພື່ອຊຳຣະລ້າງຄວາມບາບຂອງພວກເຮົາ.

**ເປັນການສົມຄວນຢ່າງໃດ ເພື່ອຕອບສນອງການຕາຍຂອງພຣະເຢຊູ?**

- ໃຫ້ຮູ້ວ່າພຣະອົງໄດ້ສິ້ນພຣະຊົນເພື່ອຄວາມບາບຂອງເຮົາ
- ຂອບຄຸນພຣະເຢຊູທີ່ພຣະອົງໄດ້ເຂົ້າໄປທີ່ໄມ້ກາງແຂນ ແລະສິ້ນພຣະຊົນເພື່ອເຮົາ.
- ໃຫ້ເຮົາມີຊີວິດທີ່ສົມຄວນ ເພື່ອເປັນການຂອບພຣະຄຸນຕໍ່ພຣະອົງ (ເຊື່ອຟັງ)
- ບອກຄົນອື່ນເຖິງສິ່ງທີ່ພຣະເຢຊູໄດ້ກະທຳເພື່ອເຮົາ ແລະສິ່ງທີ່ພຣະອົງຕ້ອງການກະທຳຕໍ່ຄົນອື່ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org., by BV.